# ຂໍ້ມູນການບໍລິການທຸລະກິດ (Business Services Information)
## ຈາກຫ້ອງວ່າການລັດຖະມົນຕີຂອງລັດມິນເນໂຊຕາ (Office of the Minnesota Secretary of State)

## ການດຳເນີນການເພີ່ມເຕີມແລະການຕິດຕໍ່ ບາດນີ້ທີ່ທ່ານໄດ້ຍື່ນສຳເລັດແລ້ວ

ອາດມີຂັ້ນຕອນເພີ່ມເຕີມທີ່ຈຳເປັນອື່ນອີກຫຼັງຈາກທີ່ຫ້ອງການຂອງພວກເຮົາໄດ້ຮັບການລົງທະບຽນຂອງທ່ານ. ກະລຸນາອ່ານຂໍ້ມູນທີ່ສະຫນອງໃຫ້ຂ້າງລຸ່ມນີ້. ຖ້າທ່ານມີຄຳຖາມໃດ ໆ, ກະລຸນາຕິດຕໍ່ຫ້ອງການຂອງພວກເຮົາທີ່ເບີ 651-296-2803, ໂທຟຣີ: 1-877-551-6767, Minnesota Relay 711 ຫຼືທາງອີເມລ໌ທີ່: business.services@state.mn.us, ຫຼືໄປຢ້ຽມຢາມເວັບໄຊທ໌ຂອງພວກເຮົາ : www.sos.state.mn.us.

**ຊື່ສົມມຸດຕິ:** ຖ້າທ່ານຍື່ນໃບຮັບຮອງຊື່ສົມມຸດຕິຫຼືໃບຢັ້ງຢືນການແກ້ນາມສົມມຸດ, ທ່ານຕ້ອງເຜີຍແຜ່ໄວ້ໃນ "ຫນັງສືພິມທາງດ້ານກົດຫມາຍ" ໃນເຂດທີ່ທຸລະກິດຕັ້ງຢູ່. ທ່ານສາມາດເອົາບັນຊີລາຍຊື່ຂອງຫນັງສືພິມເຫຼົ່ານັ້ນໄດ້ໃນເວັບໄຊທ໌ຂອງພວກເຮົາພາຍໃຕ້ທຸລະກິດ & ປະກັນ (Business & Liens), ເລີ່ມຕົ້ນທຸລະກິດ (Start a Business), ຫນັງສືພິມທາງດ້ານກົດຫມາຍ (Legal Newspapers) ແລະບັນຊີລາຍຊື່ຂອງຫນັງສືພິມທາງດ້ານກົດຫມາຍ. ທ່ານຕ້ອງເຜີຍແຜ່ຂໍ້ຄວາມໃນໃບຢັ້ງຢືນຫຼືໃບຢັ້ງຢືນການແກ້ໃນຫນັງສືພິມສອງສະບັບຕິດຕໍ່ກັນ (ສອງມື້ຕິດຕໍ່ກັນຖ້າແມ່ນຫນັງສືພິມປະຈຳວັນ; ສອງອາທິດຕິດຕໍ່ກັນຖ້າແຫມ່ນຫນັງສືພິມປະຈຳອາທິດ). ການຍື່ນຊື່ສົມມຸດຕິຂອງທ່ານອາດບໍ່ຖືກຕ້ອງຖ້າທ່ານບໍ່ເຮັດຂັ້ນຕອນນີ້ໃຫ້ແລ້ວ. ຕິດຕໍ່ຫນັງສືພິມເພື່ອຂໍຄຳແນະນຳເພີ່ມເຕີມກ່ຽວກັບວິທີການເຜີຍແຜ່ນີ້. ຫຼັງຈາກພິມເຜີຍແຜ່ແລ້ວ, ຫນັງສືພິມຈະສະຫນອງຂໍ້ມູນຂ່າວສານການພິມເຜີຍແຜ່ທີ່ທ່ານຄວນຈະເກັບຮັກສາໄວ້ໃນບັນທຶກທຸລະກິດຂອງທ່ານ.

ນອກຈາກນັ້ນ, ທ່ານຕ້ອງຍື່ນຕໍ່ອາຍຸປະຈຳປີຫນຶ່ງຄັ້ງໃນທຸກໆ ປີປະຕິທິນ, ເລີ່ມຕົ້ນໃນປີປະຕິທິນຫຼັງຈາກການທ່ານຍື່ນຕົ້ນສະບັບຂອງທ່ານກັບຫ້ອງການລັດຖະມົນຕີຂອງລັດ. ຊື່ສົມມຸດຕິຂອງທ່ານຈະໝົດອາຍຸຖ້າທ່ານບໍ່ຍື່ນການຕໍ່ອາຍຸປະຈຳປີ. ຖ້າຊື່ສົມມຸດຕິຂອງທ່ານຫມົດອາຍຸ, ທ່ານສາມາດຈະເອົາຊື່ກັບຄືນມາໃຊ້ໃຫມ່ໄດ້ (ຖ້າຍັງມີຊື່ຢູ່) ໂດຍຍື່ນຕໍ່ອາຍຸໃນປີປະຈຸບັນແລະຈ່າຍຄ່າທຳນຽມທີ່ກຳນົດໄວ້.

**Corporation, Co-op, LLC, LLP ຫຼື LP**: ຖ້າທ່ານຍື່ນເອກະສານຕັ້ງທຸລະກິດປະເພດ Minnesota, ທຸລະກິດຕ່າງຊາດ (Foreign Business) ຫຼື ບໍລິສັດບໍ່ຫວັງຜົນກຳໄລ (Non-Profit Corporation), ຫຼື ສະຫະກອນ (Cooperative), ບໍລິສັດຮັບຜິດຊອບຈຳກັດ (Limited Liability Company), ຫຸ້ນສ່ວນຄວາມຮັບຜິດຊອບຈຳກັດ (Limited Liability Partnership) ຫຼື ຫຸ້ນສ່ວນຈຳກັດ (Limited Partnership), ທ່ານຕ້ອງຍື່ນຕໍ່ອາຍຸປະຈຳປີທຸກໆ ປີປະຕິທິນ ຫຼັງຈາກການທ່ານຍື່ນຕົ້ນສະບັບຂອງຫ້ອງການລັດຖະມົນຕີຂອງລັດ. ຖ້າທ່ານບໍ່ຍື່ນການຕໍ່ອາຍຸປະຈຳປີຂອງທ່ານ ນິຕິບຸກຄົນຂອງທ່ານຈະເປັນນິຕິບຸກຄົນ “ຖືກຍຸບເລີກແລ້ວຕາມກົດໝາຍ” (ລັດ Minnesota ບໍ່ຮັບຮູ້ວ່າມີຢູ່ໃນລັດອີກຕໍ່ໄປ). ຖ້ານິຕິບຸກຄົນຂອງທ່ານຖືກຍຸບເລີກແລ້ວຕາມກົດໝາຍ, ທ່ານສາມາດຈະເອົາຊື່ກັບຄືນມາໃຊ້ໃຫມ່ໄດ້ (ຕາບໃດທີ່ຍັງມີຊື່ຢູ່) ໂດຍຍື່ນຕໍ່ອາຍຸໃນປີປັດຈຸບັນແລະຈ່າຍຄ່າທຳນຽມທີ່ກຳນົດໄວ້.

ນອກເຫນືອຈາກການຍື່ນຕໍ່ອາຍຸປະຈຳປີ, ທຸລະກິດເພື່ອຜົນກຳໄລສາທາລະນະຈຳເປັນຕ້ອງໄດ້ຍື່ນບົດລາຍງານຜົນປະໂຫຍດປະຈຳປີໃນແຕ່ລະປີກ່ອນວັນທີ 1 ເດືອນເມສາ, ເຊິ່ງກວມເອົາໄລຍະເວລາສິບສອງເດືອນທີ່ສິ້ນສຸດລົງໃນວັນທີ 31 ເດືອນທັນວາຂອງປີກ່ອນແລະຈ່າຍຄ່າທຳນຽມ 35 ໂດລາໃຫ້ຫ້ອງການລັດຖະມົນຕີຂອງລັດ.

**ການຈອງຊື່:** ຫາກວ່າທ່ານຍື່ນຈອງຊື່ໄວ້, ຖືວ່າທ່ານໄດ້ຈອງຊື່ໄວ້ເປັນໄລຍະເວລາສິບສອງເດືອນນັບຕັ້ງແຕ່ວັນທີ່ທ່ານຍື່ນຈອງ. ທ່ານສາມາດຕໍ່ອາຍຸໄດ້ໃນແຕ່ລະປີອີກສິບສອງເດືອນ ໂດຍການຍື່ນແບບຟອມການຈອງຊື່ອີກແບບຟອມແລະຈ່າຍຄ່າທຳນຽມທີ່ກຳນົດໄວ້ກ່ອນວັນທີທີ່ການຈອງຫມົດອາຍຸ. ຖ້າການຈອງຊື່ຂອງທ່ານຫມົດອາຍຸ, ທ່ານສາມາດຍື່ນຈອງຊື່ໃຫມ່ (ຕາບໃດທີ່ຍັງມີຊື່ຢູ່) ໂດຍຍື່ນແບບຟອມການຈອງຊື່ແລະຈ່າຍຄ່າທຳນຽມທີ່ກຳນົດໄວ້.

**ເຄື່ອງໝາຍການຄ້າ:** ຖ້າທ່ານຍື່ນທະບຽນເຄື່ອງໝາຍການຄ້າ, ທະບຽນຂອງທ່ານມີອາຍຸ 10 ປີນັບຈາກວັນທີ່ຍື່ນເອກະສານ. ທ່ານສາມາດຕໍ່ອາຍຸໄດ້ອີກສິບປີໂດຍການຍື່ນແບບຟອມຕໍ່ອາຍຸ ແລະຈ່າຍຄ່າທຳນຽມທີ່ກຳນົດໄວ້ໃນລະຫວ່າງຫົກເດືອນກ່ອນວັນໝົດອາຍຸ.

**ທີ່ດິນກະສິກຳ:** ທຸລະກິດທີ່ເປັນເຈົ້າຂອງ, ເຊົ່າ ຫຼື ມີຜົນປະໂຫຍດດ້ານການເງິນໃນທີ່ດິນກະສິກຳ ຫຼື ທີ່ດິນທີ່ສາມາດເຮັດກະສິກຳໄດ້ຕ້ອງລົງທະບຽນກັບກະຊວງກະສິກຳ.

**ການບໍລິການອອນໄລນ໌ແມ່ນມີຢູ່ກັບຫ້ອງການລັດຖະມົນຕີຂອງລັດ.** ສັ່ງຊື້ໃບຢັ້ງຢືນທຸລະກິດ, ສຳເນົາທຸລະກິດ, ຫຼືຍື່ນເອກະສານທຸລະກິດທາງອອນໄລນ໌ໂດຍໃຊ້ບັດເຄຣດິດຈ່າຍເງິນ. ໄປຢ້ຽມຢາມເວັບໄຊທ໌ຂອງພວກເຮົາ: www.sos.state.mn.us

ຫ້ອງການລັດຖະມົນຕີຂອງລັດບໍ່ໄດ້ໃຫ້ຄຳແນະນຳທາງດ້ານກົດຫມາຍຫຼືຄຳແນະນຳທາງດ້ານທຸລະກິດ. ຂໍ້ມູນນີ້ໄດ້ນຳສະເຫນີເພື່ອຄວາມສະດວກໃຫ້ລູກຄ້າຂອງພວກເຮົາ. ຫ້ອງການບໍ່ຮັບປະກັນການບໍລິການທີ່ສະຫນອງໃຫ້ໂດຍອົງການຈັດຕັ້ງທີ່ໃຫ້ລາຍຊື່ໄວ້. ຫນ້ານີ້ບໍ່ໄດ້ມີຂໍ້ກຳນົດທັງຫມົດສຳລັບທຸລະກິດທີ່ລົງທະບຽນໃຫມ່. ກະລຸນາປຶກສາທີ່ປຶກສາທາງດ້ານກົດໝາຍ ຫຼືທີ່ປຶກສາທາງທຸລະກິດຂອງທ່ານເອງສຳລັບຂໍ້ມູນແລະຄຳແນະນຳກ່ຽວກັບສະຖານະການຂອງທ່ານເອງ.

## ໝາຍເລກປະຈໍາຕົວຜູ້ເສຍພາສີ, ໃບອະນຸຍາດ ແລະ ແຫຼ່ງຂໍ້ມູນດ້ານທຸລະກິດອື່ນໆ

**INTERNAL REVENUE SERVICE**
ສໍາລັບແບບຟອມ ID# ຂອງນາຍຈ້າງ: 1-800-829-3676
ໂທ. ເພື່ອຂໍໃຫ້ຊ່ວຍເຫຼືອສໍາລັບທຸລະກິດ: 1-800-829-4933
ໂທ. ເພື່ອຂໍໃຫ້ຊ່ວຍເຫຼືອສໍາລັບອົງການຈັດຕັ້ງທີ່ໄດ້ຮັບການຍົກເວັ້ນພາສີ: 1-877-829-5500
ເວັບໄຊທ໌: www.irs.gov

**DEPARTMENT OF REVENUE**
ຂໍ້ມູນທົ່ວໄປ: 651-296-6181
ຂໍ້ມູນ ID ພາສີຂອງລັດ: 651-282-5225 or 1-800-657-3605
ເວັບໄຊທ໌: www.revenue.state.mn.us

**DEPARTMENT OF LABOR & INDUSTRY**
ຂໍ້ມູນທົ່ວໄປແລະຂໍ້ມູນການປະກັນໄພລູກຈ້າງ: 651-284-5000
ຂໍ້ມູນໃບອະນຸຍາດຂອງຜູ້ຮັບເໝົາ: 651-284-5034
ເວັບໄຊທ໌: www.doli.state.mn.us

**DEPARTMENT OF COMMERCE**
ການອອກໃບອະນຸຍາດຂອງທະນາຄານ, ສະຫະພັນສິນເຊື່ອ, ປະກັນໄພ, ອະສັງຫາລິມະສັບ, ຫຼັກຊັບ, ແລະອື່ນໆ.
ໂທລະສັບ: 651-539-1500
ເວັບໄຊທ໌: www.commerce.state.mn.us

**DEPARTMENT OF EMPLOYMENT & ECONOMIC DEVELOPMENT (DEED)**
ໂຄງການປະກັນໄພການຫວ່າງງານຂອງລັດ MN ແລະຂໍ້ມູນບັນຊີນາຍຈ້າງຂອງປະກັນໄພຫວ່າງງານ:
651-296-3644, ເວັບໄຊທ໌: www.uimn.org

**SMALL BUSINESS ASSISTANCE**
ເຜີຍແຜ່ "ຄູ່ມືການເລີ່ມຕົ້ນທຸລະກິດໃນ MN"
ໂທລະສັບ: 651-556-8425 or 1-800-310-8323
ເວັບໄຊທ໌: www.mnsbao.com

**ສູນພັດທະນາຊາວອາຟຣິກກາຂອງມິນເນໂຊຕາ (AFRICAN DEVELOPMENT CENTER OF MINNESOTA)** - ອົງການຊ່ວຍເຫຼືອຊຸມຊົນ. ໂທລະສັບ: 612-333-4772 ເວັບໄຊທ໌: www.adcminnesota.org

**ສູນພັດທະນາຊາວອາຟຣິກກາຂອງມິນເນໂຊຕາ (LATINO ECONOMIC DEVELOPMENT CENTER)** - ອົງການຊ່ວຍເຫຼືອຊຸມຊົນ. ໂທລະສັບ: 612-724-5332 ອີເມລ: info@ledc-mn.org; Website: www.ledc-mn.org

**LEGAL CORPS** - ກຸ່ມທະນາຍຄວາມອາສາສະໝັກສໍາລັບທຸລະກິດຂະໜາດນ້ອຍແລະອົງການບໍ່ຫວັງຜົນກໍາໄລ Phone: 1-888-454-5267 ຫຼື 612-206-0780 ເວັບໄຊທ໌: www.legalcorps.org

**METROPOLITAN ECONOMIC DEVELOPMENT ASSOCIATION (MEDA)** - ຊ່ວຍຜູ້ປະກອບການຊາວຜິວສີໃຫ້ປະສົບຄວາມສໍາເລັດ. ໂທລະສັບ: 612-332-6332; ອີເມລ: info@meda.net; ເວັບໄຊທ໌: www.meda.net

**MINNESOTA ATTORNEY GENERAL** - ຂໍ້ມູນທຣັສຕ໌ຂອງທຸລະກິດທີ່ບໍ່ຫວັງຜົນກໍາໄລແລະການກຸສົນ. ໂທລະສັບ: 651-296-3353 ຫຼື 1-800-657-3787 ເວັບໄຊທ໌: www.ag.state.mn.us.

**MINNESOTA COUNCIL OF NONPROFITS** - ວິທີເລີ່ມຕົ້ນກອງປະຊຸມທຸລະກິດທີ່ບໍ່ຫວັງຜົນກໍາໄລແລະຄູ່ມື. ໂທລະສັບ: 651-642-1904; ເວັບໄຊທ໌: www.minnesotanonprofits.org.

**MINNESOTA STATE LEGISLATURE** - ກົດໝາຍ ແລະ ກົດ. ເວັບໄຊທ໌: www.leg.state.mn.us

**PROPEL NONPROFITS** - ການສະໜັບສະໜູນທາງການເງິນສໍາລັບອົງກອນທີ່ໃໝ່ກວ່າ. ໂທລະສັບ: 612-249-6700; ເວັບໄຊທ໌: www.propelnonprofits.org

**SERVICE CORPS OF RETIRED EXECUTIVES (SCORE)** - ທີ່ປຶກສາທຸລະກິດຂະໜາດນ້ອຍຂອງອາເມລິກາໃຫ້ຄໍາແນະນໍາທຸລະກິດຟຣີ. ໂທລະສັບ: 952-938-4570; ເວັບໄຊທ໌: www.score.org

**SMALL BUSINESS ASSISTANCE** - Division of the Minnesota Department of Employment & Economic Development (DEED), ເຊິ່ງເຜີຍແຜ່ "ຄູ່ມືການເລີ່ມຕົ້ນທຸລະກິດໃນລັດມິນເນໂຊຕາ" ແລະເກັບລາຍຊື່ໃບອະນຸຍາດ ແລະຂໍ້ມູນການອະນຸຍາດ. ໂທລະສັບ: 651-556-8425 ຫຼື 1-800-310-8323; ເວັບໄຊທ໌: www.mnsbao.com

**UNITED STATES COPYRIGHT OFFICE** - ໂທລະສັບ: 202-707-3000; ເວັບໄຊທ໌: www.copyright.gov

**UNITED STATES PATENTS & TRADEMARKS** - ໂທລະສັບ: 1-800-786-9199; ເວັບໄຊທ໌: www.uspto.gov

**UNITED STATES POSTAL SERVICE** - ໂທລະສັບ: 1-800-275-8777; ເວັບໄຊທ໌: www.usps.com

**UNITED STATES SMALL BUSINESS ADMINISTRATION** - ໂຄງການທຸລະກິດຂະໜາດນ້ອຍແລະການບໍລິການ. ໂທລະສັບ: 1-800-827-5722 ເວັບໄຊທ໌: www.sba.gov

**VETERANS RESOURCE** - Minnesota Department of Employment and Economic Development. ເວັບໄຊທ໌: http://www.positivelyminnesota.com/JobSeekers/Veterans/index.aspx

**WOMEN VENTURE** - ອົງການພັດທະນາເສດຖະກິດທີ່ບໍ່ຫວັງຜົນກໍາໄລທີ່ຊ່ວຍໃຫ້ແມ່ຍິງບັນລຸຄວາມພຽງພໍທາງດ້ານເສດຖະກິດໂດຍຜ່ານການສ້າງ ແລະການຂະຫຍາຍຕົວຂອງທຸລະກິດທີ່ມີກໍາໄລ ແລະຍືນຍົງໝັ້ນຄົງ. ໂທລະສັບ: 612-224-9540; Website: www.womenventure.org

ເອກະສານນີ້ມີໃນຮູບແບບສະຫັບສໍາລັບບຸກຄົນພິການ.